ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 250/ຈທວ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2017

ເຖິງ: ວິສາຫະກິດທີ່ກ່ຽວຂ້ອງ

ເລື່ອງ: ຢຸດຕິການເຄື່ອນໄຫວທຸລະກິດ ໃນ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ເລກທີ 1142/ຫສນຍ.ກຄສ, ລົງວັນທີ 02 ສິງຫາ 2017;
- ອີງຕາມ ໜັງສືຂອງ ທະນາຄານແຫ່ງ ສປປ ລາວ, ເລກທີ 58/ກຄສງ, ລົງວັນທີ 31 ມີນາ 2017.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) ແຈ້ງມາຍັງ: 1) ບໍລິສັດ ແຟັກອິນເວັດສ; 2) ບໍລິສັດ ເອວເອບຊີ ທີ່ປຶກສາການລົງທຶນ; 3) ບໍລິສັດ ເອັບບີເອດສ ລາວ; 4) ບໍລິສັດ ສະວິດຄອຍ; 5) ບໍລິສັດ ມາສສີບ ແອັດລາວ ແລະ 6) ບໍລິສັດ ທີຄັບ ກາຊີໂນ ຮັບຊາບ ແລະ ປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ໃຫ້ຢຸດຕິການເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ທັນທີ ແລະ ໃນທຸກຮູບແບບ ໃນກໍລະນີລະເມີດ ຈະຖືກປະຕິບັດມາດຕະການ ແລະ/ຫຼື ດຳເນີນຄະດີ ຕາມກົດໝາຍທີ່ກ່ຽວຂ້ອງ;

2. ໃນກໍລະນີ ບໍລິສັດໃດໜຶ່ງ ດັ່ງທີ່ກ່າວມາເທິງນີ້ ໄດ້ຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ ໃຫ້ເຂົ້າມາຊີ້ແຈງສະພາບການເຄື່ອນໄຫວ ແລະ ທີ່ຕັ້ງສຳນັກງານຂອງຕົນ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ພາຍໃນກຳນົດເວລາ 1 ເດືອນ ນັບແຕ່ວັນທີ 28 ສິງຫາ 2017 ຫາ ວັນທີ 28 ກັນຍາ 2017 ເພື່ອຊາບ ແລະ ພິຈາລະນາແກ້ໄຂຕາມຄວາມເໝາະສົມ;

3. ການຢຸດຕິການເຄື່ອນໄຫວທຸລະກິດ ຕາມ ຂໍ້ 1 ເທິງນີ້ ຈະບໍ່ເຮັດໃຫ້ຄວາມຮັບຜິດຊອບ ຕໍ່ການກະທຳຜິດຂອງບັນດາບໍລິສັດດັ່ງກ່າວ ໃນໄລຍະຜ່ານມາຕົກໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເຈົ້າໜ້າທີ່ ທະບຽນວິສາຫະກິດ

ຫຸມແພງ ຄຳພາສິດ

Houmpheng KHAMPHASITH

ບ່ອນສົ່ງ:

| | |
|---|---|
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 1 ສະບັບ; |
| - ທະນາຄານແຫ່ງ ສປປ ລາວ | 1 ສະບັບ; |
| - ກົມສອບສວນສາຍກາອນ | 1 ສະບັບ; |
| - ບໍລິສັດທີ່ກ່ຽວຂ້ອງ | 1 ສະບັບ; |
| - ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ | 1 ສະບັບ; |
| - ຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ | 1 ສະບັບ; |
| - ພະແນກອຸດສາຫະກຳ ແລະ ການຄ້າ ນວ | 1 ສະບັບ; |
| - ສຳເນົາ | 1 ສະບັບ. |

Scanned by CamScanner